ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 16 ຫາ 20 ຕຸລາ 2023



ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ
ລົງຊຸກຍູ້ວຽກງານການຜະລິດກະສິກຳເປັນສິນຄ້າ ຢູ່ເມືອງປາກຊ່ອງ, ແຂວງຈຳປາສັກ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ ລົງຊຸກຍູ້ວຽກງານການຜະລິດກະສິກຳເປັນສິນຄ້າ ຢູ່ເມືອງ ປາກຊ່ອງ ແຂວງ ຈຳປາສັກ

ໃນວັນທີ 17 ຕຸລາ 2023 ທີ່ຜ່ານມານີ້ ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງໆ ຄຳມ່ວນ ພ້ອມດ້ວຍຄະນະ ລົງຊຸກຍູ້ວຽກງານການຜະລິດກະສິກຳເປັນສິນຄ້າ ຢູ່ເມືອງ ປາກຊ່ອງ ແຂວງ ຈຳປາສັກ ໂດຍການຕ້ອນຮັບຂອງທ່ານ ປອ. ສົມລິດ ວິລະວົງ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ຈຳປາສັກ ພ້ອມດ້ວຍຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ປາກຊ່ອງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ການຕ້ອນຮັບຢ່າງອົບອຸ່ນ.

ໃນການລົງເຄື່ອນໄຫວວຽກງານຄັ້ງນີ້ ຄະນະດັ່ງກ່າວ ໄດ້ລົງຢ້ຽມຢາມ ບໍລິສັດ ລາວຟາມ ຊຶ່ງເປັນຟາມລ້ຽງງົວພັນຊີ້ນຂອງ ທ່ານ ດາວັນ ບຸບຜາພັນ ຊຶ່ງຕັ້ງຢູ່ເຂດຄຸ້ມຄອງຂອງ ບ້ານ ຫ້ວຍກອງ ກຸ່ມທີ 9 ເມືອງ ປາກຊ່ອງ, ແຂວງ ຈຳປາສັກ ຫ່າງຈາກເມືອງປາກຊ່ອງ ໄປທາງທິດຕາເວັນອອກສ່ຽງໃຕ້ປະມານ 33 ກິໂລແມັດ ເຊິ່ງມີເນື້ອທີ່ດິນທັງໝົດ 113 ເຮັກຕາ ໃນນັ້ນເນື້ອທີ່ດິນປູກຫຍ້າ 90 ເຮັກຕາ, ຊຶ່ງເປັນຟາມລ້ຽງງົວພັນຊີ້ນ ປະກອບມີ 5 ສາຍພັນ ຄື: ພັນແອງກັຊ, ຊາລູເລ, ບຣາມັນ, ພັນບັກຄິວ, ພັນບິຊມາດເຕີ້. ປັດຈຸບັນ ຟາມງົວຂອງບໍລິສັດ ລາວຟາມ ມີງົວທັງໝົດ 1.100 ກວ່າໂຕ, ພ້ອມນີ້ ພາຍໃນຟາມ ຂອງບໍລິສັດດັ່ງກ່າວ ຍັງໄດ້ມີນັກວິຊາການດ້ານສັດຕະວະແພດ, ວິຊາການດ້ານການປະສົມພັນທຽມ ແລະ ພະນັກງານພາຍໃນຟາມລ້ຽງງົວ. ສຳລັບການໃຫ້ອາຫານງົວມື້ໜຶ່ງໃຫ້ 3 ຄາບຄື: ຕອນເຊົ້າໃຫ້ຮຳອ່ອນ, ທ່ຽງ ແລະ ຕອນແລງ ຈະໃຫ້ຫຍ້າບົດ ພ້ອມນີ້ທາງຟາມຫຍັງມີຫ້ອງແລັບ ເພື່ອຜະລິດນ້ຳເຊື້ອ ງົວ ຕື່ມອີກ. ສຳ



ລັບທິດທາງແຜນການໃນຕໍ່ໜ້າ ທາງ ບໍລິສັດ ລາວ ຟາມ ຈະສືບຕໍ່ຂະຫຍາຍຟາມຕື່ມຢູ່ທີ່ນະຄອນຫຼວງ ວຽງຈັນ ເພື່ອຍົກລະດັບໃນການຜະລິດລູກງົວ, ການ ຮີດນ້ຳເຊື້ອເພື່ອບໍລິການປະສົມທຽມໃຫ້ປະຊາຊົນ ພ້ອມທັງສ້າງເປັນຟາມຕົວແບບ ໃນການລ້ຽງງົວ ເປັນສິນຄ້າ, ໃນການລົງຢ້ຽມຢາມ ບໍລິສັດ ລາວ ຟາມ ໃນຄັ້ງນີ້ ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ສະເໜີໃຫ້ສືບຕໍ່ຂະຫຍາຍໃຫ້ຫຼາຍກວ່າເກົ່າ ຕິດພັນ ກັບການສ້າງສູດອາຫານທີ່ເປັນຂອງ ບໍລິສັດເອງ, ສືບຕໍ່ສ້າງບຸກຂະລາກອນດ້ານວິຊາການຕ່າງໆ ເພື່ອຂະຫຍາຍແນວພັນງົວພາຍໃນຟາມ ແລະ ພ້ອມ ທັງສົ່ງເສີມໃຫ້ປະຊາຊົນລ້ຽງ. ເວລາຕໍ່ມາຄະນະດັ່ງ ກ່າວໄດ້ລົງຢ້ຽມຢາມ ສວນປູກຖົ່ວລຽນ ຂອງບໍລິສັດ ດາຍຖັງ ເບື້ອງຕົ້ນບໍລິສັດດັ່ງກ່າວ ແມ່ນເລີ່ມຕົ້ນໃນ ການລົງທຶນປູກໝາກນອດ ເພື່ອສົ່ງອອກເປັນສິນຄ້າ ເວລາຕໍ່ມາເຫັນໄດ້ວ່າ ການປູກໝາກນອດມີອາຍຸ ແລະ ໃຫ້ຜົນເກັບກ່ຽວພຽງແຕ່ 3 ປີ. ເພື່ອເຮັດໃຫ້ ມີຄວາມຍືນຍົງ ແລະ ເປັນໄປຕາມແນວທາງຂອງ ພັກ ແລະ ລັດຖະບານ ກໍຄື ກະຊວງກະສິກຳ ແລະ ປ່າໄມ້ ວາງອອກໃນການສົ່ງເສີມການຜະລິດທີ່ເປັນ ສິນຄ້າ ສີຂຽວ ແລະ ຍືນຍົງ. ດັ່ງນັ້ນ, ບໍລິສັດ ຈຶ່ງຫັນ ມາປູກຖົ່ວລຽນ ໃນເນື້ອທີ່ 700 ກວ່າເຮັດຕາ. ມາ ເຖິງປັດຈຸບັນ, ການປູກຖົ່ວລຽນ ແມ່ນໄດ້ 3 ປີ ເພື່ອ ເປັນການປັບປຸງດິນ ແລະ ເປັນການສ້າງລາຍຮັບ ເພີ່ມ ທາງບໍລິສັດຍັງໄດ້ປູກພືດເສີມເປັນຕົ້ນແມ່ນ: ປູກໝາກກ້ວຍ, ສາລີ ສັບຫວ່າງຕົ້ນຖົ່ວລຽນຕື່ມອີກ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;